# ຊ້າງເພື່ອນແກ້ວ



ການປົກປ້ອງຊ້າງອາຊີ
ElefantAsia
Protecting the Asian Elephant

ອຸປະຖຳໂດຍ




ສະບາຍດີ ຂ້ອຍຊື່ ຄຳຫລ້າ ແລະ ອັນນີ້ແມ່ນ ຄຳມີ, ຄຳມີແມ່ນຊ້າງຂອງຄອບຄົວເຮົາ ພວກເຮົາຢູ່ເມືອງ ປາກລາຍ , ແຂວງໄຊຍະບູລີ ໃນພາກເໜືອຂອງລາວ. ໃນໝູ່ບ້ານຂອງຂ້ອຍໄດ້ ລ້ຽງແລະ ຝຶກຊ້າງມາເປັນເວລາຫລາຍຮ້ອຍປີແລ້ວ ມາກັບພວກເຮົາ,ພວກເຮົາຈະພາເຈົ້າທ່ອງທ່ຽວໃນໂລກແຫ່ງທຳມະຊາດຂອງຊ້າງ.




ຊ້າງຂອງຂ້ອຍມັນມັກນ້ຳຫລາຍ ! ເວລາມັນດື່ມນ້ຳມັນມັກໃຊ້ງວງດູດນ້ຳສາດໃສ່ໂຕຂອງມັນ ການສາດນ້ຳໃສ່ໂຕຂອງມັນແມ່ນເພື່ອຊ່ວຍໃຫ້ຮ່າງກາຍມັນເຢັນ ເວລາມັນຮູ້ສຶກຮ້ອນໂພດ. ຊ້າງບໍ່ມັກຄວາມຮ້ອນ ຊ້າງມັກຢູ່ໃກ້ແມ່ນ້ຳ ແລະ ຢູ່ໃນຮົ່ມເງົາຕົ້ນໄມ້ໃນປ່າໃຫ
ສະນັ້ນພວກເຮົາຈຶ່ງລ້ຽງ ຄ່າມີ ໄວ້ໃນປ່າໃກ້ບ້ານເຮົາ ຍ້ອນຢູ່ໃນປ່ານັ້ນມັນຈະຊອກກິນໝາກໄມ້ໄດ້ຫລາຍເພາະມັນມັກກິນຫລາຍ.




ຊ້າງແມ່ນສັດລ້ຽງລູກດ້ວຍນົມແມ່ທີ່ໃຫຍ່ກວ່າໝູ່ໝົດໃນໂລກ ! ຊ້າງໂຕໃຫຍ່ຈະມີນໍ້າໜັກຮອດ 3500 ກິໂລ ແລະ ສູງເຖິງ 3 ແມັດ ! ຊ້າງມີດັງຍາວເອີ້ນວ່າ : ງວງ , ມີຫູໃຫຍ່ພີພັບເພື່ອໃຫ້ໂຕເຢັນ ແລະ ຊ້າງໂຕຜູ້ຈະມີ ງາ, ຊຶ່ງແມ່ນແຂ້ວທີ່ ຍາວເປັນງາ ຊ້າງແມ່ນສັດທີ່ກິນພືດຜັກ ແລະ ມີຊີວິດຍືນເຖິງ 80 ປີ ; ຊ້າງມີຄວາມສະຫລາດຫລາຍ ແລະ ຈະຢູ່ນໍາຄອບຄົວຊຶ່ງແມ່ນຊ້າງແມ່ເປັນຜູ້ນໍາ .




ໃນປະເທດລາວ , ກໍ່ຄືກັບກັບປະເທດອື່ນໃນທະວີບອາຊີ ຊ້າງຈະເປັນສັດທີ່ສັກສິດຖືວ່າເປັນສັດໃນຊາດກ່ອນຂອງພະພຸດພະເຈົ້າ ເພິ່ນກໍ່ໄດ້ເກີດມາເປັນຊ້າງເຜືອກ. ແຕ່ກ່ອນປະເທດລາວກໍ່ມີຊື່ວ່າ :ລ້ານຊ້າງ ແລະ ເຈົ້າກໍ່ຈະເຫັນຮູບຊ້າງ ໄດ້ຕິດແຕ້ມໄວ້ຢູ່ທຸກບ່ອນໃນປະເທດ.




ຊ້າງທີ່ລ້ຽງໄດ້ ແມ່ນລ້ຽງໄວ້ລາກແກ່ໄມ້ທ່ອນໃນປ່າ, ຊ້າງຈະແຂງແຮງຫລາຍສາມາດດຶງໄມ້ທ່ອນໄດ້ຮອດ 4 ໂຕນ ! " ຄວານຊ້າງ " ແມ່ນມີຄວາມຊຳນິຊຳນານຫລາຍແລະເຮັດວຽກເປັນທີມງານກັບຊ້າງ, ຄວານຊ້າງຈະເປັນຄົນອອກຄຳສັ່ງ ແລ້ວຊ້າງກໍ່ຈະເຮັດນຳ.




ເວລາທີ່ຄວານໃຫ້ຊ້າງເຮັດວຽກໜັກຫລາຍບາງເທື່ອຊ້າງກໍ່ເກີດອຸບັດຕິເຫດ ! ສະນັ້ນເຮົາເຈົ້າຕ້ອງໄດ້ເອີ້ນສັດຕະວະແພດມາປິ່ນປົວ ແລະ ຈ່າຍເງິນເພື່ອປິ່ນປົວບາດແຜ. ເວລາທີ່ຊ້າງເຮັດວຽກໜັກຫລາຍຊ້າງກໍ່ຈະບໍ່ມີເວລາຫຼືບໍ່ມີຄວາມກະຕືລືລົ້ນທີ່ຈະມີຄວາມຮັກ ແລະ ປະສົມພັນໃຫ້ມີລູກສືບພັນໄດ້ ! ອັນນີ້ເປັນສາຍເຫດທີ່ເຮັດໃຫ້ຊ້າງມີລູກໜ້ອຍລົງໃນລາວ




ຄຳມີ ຈະພາພວກເຮົາເຂົ້າໄປໃນປ່າເລິກ ! ແຖວນີ້ເປັນປ່າສະຫງວນ ! ມີປະມານ 20 ບ່ອນທີ່ເປັນບ່ອນປ່າສະຫງວນໃນລາວ. ໃນເຂດສະຫງວນແມ່ນວ່າຫ້າມເດັດຂາດບໍ່ໃຫ້ຕັດຕົ້ນໄມ້ຫຼືລ່າສັດປ່າ. ພໍ່ຂອງ ຄຳມີ ເປັນຊ້າງປ່າທີ່ເຄີຍຢູ່ປ່າແຫ່ງນີ້ມາກ່ອນທີ່ລາວຈະຖືກຈັບ ແລະ ເອົາມາລ້ຽງດົນມາແລ້ວ.




ອັນນີ້ແມ່ນຊ້າງ ບຸນຍັງ ຊຶ່ງແມ່ນປ້າຂອງຄຳມີທີ່ເປັນຊ້າງປ່າ .ມັນເປັນຊ້າງແມ່ທົວໜ້າຝູງຊຶ່ງມີອາຍຸແກ່ກວ່າໝູ່ໝົດ ແລະ ມັນເປັນຜູ້ນຳຝູງ ຊ້າງ ບ່າພາຊ້າງ 15 ໂຕຊຶ່ງມີແຕ່ຊ້າງແມ່ ແລະ ລູກນ້ອຍ; ຫລັງຈາກທີ່ເຕີບໃຫ່ຍເຕັມທີ່ແລ້ວຊ້າງພູ້ຈະອອກຈາກຝູງແລ້ວໄປຢູ່ໂດດດ່ຽວ.




ຝູງຊ້າງຕ້ອງການເນື້ອທີ່ກວ້າງ ແລະ ມີພືດຜັກຫລາຍເພື່ອການຢູ່ລອດ, ແຕ່ຍ້ອນປ່າຖືກທຳລາຍຍ້ອນການຕັດໄມ້ທຳລາຍປ່າ, ຊ້າງທັງ 15 ໂຕນັ້ນບໍ່ມີອາຫານກິນທີ່ພຽງພໍຈຶ່ງເຂົ້າມາຊອກອາຫານ ແລະ ພືດຜັກຜົນລະປູກຂອງປະຊາຊົນ ເມື່ອອາທິດກ່ອນຝູງຊ້າງໄດ້ມາກິນ ແລະຢຽບຢໍ່າສວນໝາກບັດໝົດ; ຊ້າງບຸນຍັງ ຖືກຊາວບ້ານເອົາປືນຍິງຍ້ອນເຂົາເຈົ້າໃຈຮ້າຍ ແລະ ດຽວນີ້ບຸນຍັງກໍ່ບາດເຈັບສາຫັດ




ຊ້າງ ບຸນຍັງ ໄດ້ອະທິບາຍໃຫ້ ຄຳຫລ້າຟັງວ່າ : ຜົວຂອງຂ້ອຍ ຊຶ່ງແມ່ນຊ້າງເຖິກ( ຊ້າງຜູ້ ) ຖືກພວກລ່າແຂ້ວງາໄປຂາຍເຂົາມາຍິງເອົາງາໄປ ເດືອນແລ້ວນີ້. ພວກເຂົາເອົາງາມາງ ເພື່ອໄປຂາຍ ! ບຸນຍັງໂສກເສົ້າເຫງົາໃຈຫລາຍ




ປ້າລາວຄິດຮອດຜົວລາວຫລາຍແຕ່ວ່າລາວກໍ່ຂອບໃຈຄໍາຫລ້າ ທີ່ປິ່ນປົວແຜຂອງລາວ ລາວຈະບໍ່ລືມຄໍາຫລ້າເລີຍ, ເຈົ້າຮູ້ບໍ່ວ່າຊ້າງມັນມີຄວາມຊົງຈໍາດີຫລາຍ ແລະ ກໍ່ມັກສະແດງອາລົມ. ພວກຊ້າງຈະສື່ສານກັນດ້ວຍການໃຊ້ງວງສົ່ງກະແສຄື້ນຫາກັນ






ໃຫ້ເຈົ້າຈື່ງຈືໄວ້ ! ປ່າເປັນບ່ອນສຳຄັນ, ບໍ່ແມ່ນພຽງແຕ່ສຳລັບຊ້າງເທົ່ານັ້ນ ແຕ່ສຳລັບຄົນເຮົາກໍ່ສຳຄັນທີ່ສຸດອີກດ້ວຍ ຖ້າບໍ່ມີປ່າ, ເຈົ້າຈະໄປເກັບພືດຜັກໝາກໄມ້, ຢູ່ໃສ? ເຈົ້າຈະໄປເອົາໄມ້ ແລະ ຫວາຍຢູ່ໃສມາປຸກເຮືອນທີ່ຢູ່ອາໄສ ?ຖ້າວ່າບໍ່ມີປ່າພວກເຮົາຈະປະສົບໄພແຫ້ງແລ້ງຢ່າງຮຸນແຮງ ປະສົບໄພທຳມະຊາດອື່ນໆອີກ.



ຄຳຫລ້າ ກັບເມືອບ້ານ ລາວຮູ້ສຶກເສົ້າກັບໝູ່ຂອງລາວ. ຄົນລາວຮັກຊ້າງແຕ່ວ່າກໍ່ຍັງຕົກຢູ່ໃນໄພອັນຕະລາຍໂດຍສະເພາະຊ້າງປ່າພ້ອມທັງຊ້າງລ້ຽງ ຖ້າບໍ່ມີຊ້າງ ປະເທດເຮົາຈະເປັນແບບໃດ ? ຈະບໍ່ມີປະເທດລ້ານຊ້າງເຫຼືອອີກແລ້ວ.




ແມ່ ! ພໍ່ ! ພວກເຮົາຈະຊ່ວຍຊ້າງເຮົາແນວໃດ ? ລູກບໍ່ຢາກໃຫ້ຊ້າງຫາຍສາບສູນຕະຫລອດໄປ ມາພວກເຮົາມາຫຼິ້ນເກມເພື່ອໃຫ້ຮູ້ວ່າຄວາມສຳຄັນກ່ຽວກັບໂຕຊ້າງເປັນແນວໃດ